ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 01446/ກພສ.

ນະຄອນຫຼວງວຽງຈັນ, ວັນທີ 13 ມີນາ 2020

# ຂໍ້ຕົກລົງ

ວ່າດ້ວຍການມອບສິດໃນການອະນຸຍາດ ໃຫ້ນຳສິນຄ້າ, ເຄື່ອງຂອງ ອອກຈາກສາງ ຫຼື ດ່ານພາສີ ກ່ອນການແຈ້ງພາສີ ເປັນລາຍລະອຽດ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງ ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ
- ອີງຕາມ ບົດແນະນຳຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ສະບັບເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019 ວ່າດ້ວຍການໃຫ້ນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບແຜນນຳເຂົ້າຂອງວິສາຫະກິດ.
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງຄະນະກົມພາສີ ຄັ້ງວັນທີ 18 ກຸມພາ 2020.

## ກົມພາສີ ຕົກລົງ:

ມາດຕາ 01: ມອບສິດໃຫ້ຫົວໜ້າດ່ານພາສີສາກົນ ພິຈາລະນາອະນຸຍາດອອກໃບແຈ້ງພາສີຄ້ຳປະກັນ (IM8) ດັ່ງນີ້:

1) ການນຳເຂົ້າ ວັດຖຸດິບ, ວັດຖຸອຸປະກອນ ແລະ ອື່ນໆ ມາຮັບໃຊ້ການຜະລິດ ເປັນອັນຮີບດ່ວນ ຂອງບັນດາວິສາຫະກິດລົງທຶນ ທີ່ໄດ້ມີໜັງສືຢັ້ງຢືນຈາກຂະແໜງແຜນການ ແລະ ການລົງທຶນ ຂັ້ນສູນກາງ ຫຼື ທ້ອງຖິ່ນ.
2) ການນຳເຂົ້າ ອຸປະກອນຮັບໃຊ້ທາງການແພດ ເປັນຕົ້ນ ວັກແຊັງ, ນ້ຳຢາວິເຄາະ ແລະ ເຄື່ອງມືການແພດ.
3) ການນຳເຂົ້າ ເຄື່ອງອຸປະໂພກ-ບໍລິໂພກ, ວັດຖຸອຸປະກອນ, ເຄື່ອງມືຮັບໃຊ້ໃນໄລຍະສຸກເສີນ ທີ່ເກີດໄພພິບັດ.
4) ການນຳເຂົ້າ ສັດມີຊີວິດ, ສິນຄ້າບູດເນົ່າໄວ ແລະ ສິນຄ້າທີ່ເກັບໃນອຸນນະພູມສະເພາະ.

ມາດຕາ 02: ມອບສິດໃຫ້ຫົວໜ້າກອງຄຸ້ມຄອງພາສີ ພິຈາລະນາອະນຸຍາດໃຫ້ດ່ານພາສີສາກົນ ອອກໃບແຈ້ງພາສີຄ້ຳປະກັນ (IM8) ດັ່ງນີ້:

1) ການນຳເຂົ້າ ສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າມາ ເພື່ອງານວາງສະແດງ ແລະ ຈຳໜ່າຍສິນຄ້າ.
2) ການນຳເຂົ້າວັດຖຸອຸປະກອນ, ເຄື່ອງມືສ້ອມແປງ ແລະ ການສຳຫຼວດອອກແບບ.

ມາດຕາ 03: ການນຳເຂົ້າສິນຄ້າ, ເຄື່ອງຂອງ ທີ່ບໍ່ນອນໃນມາດຕາ 1 ແລະ 2 ແມ່ນກົມພາສີເປັນຜູ້ພິຈາລະນາອະນຸມັດ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 04: ການອະນຸຍາດໃຫ້ສິນຄ້າ, ເຄື່ອງຂອງ ອອກຈາກສາງ ຫຼື ດ່ານພາສີບ່ອນນຳເຂົ້າ ຕາມມາດຕາ 1 ແລະ 2 ຂ້າງເທິງ ຕ້ອງມີການອະນຸຍາດ ຫຼື ຢັ້ງຢືນ ຂອງຂະແໜງການລັດກ່ຽວຂ້ອງ ແລະ ປະຕິບັດຕາມ ມາດຕາ 27 ຂອງກົດໝາຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011. ໂດຍໃຫ້ດ່ານພາສີບ່ອນນຳເຂົ້າ ເປັນເຈົ້າການເລັ່ງທວງການຊຳລະສະສາງ ພາຍໃນເວລາ ທີ່ກົດໝາຍ ແລະ ລະບຽບການກ່ຽວຂ້ອງກຳນົດ, ພ້ອມທັງສະຫຼຸບສັງລວມລາຍງານ ໃຫ້ກອງຄຸ້ມຄອງພາສີ ແລະ ກົມພາສີ ເປັນແຕ່ລະເດືອນ.

ມາດຕາ 05: ມອບໃຫ້ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ດ່ານພາສີຊາຍແດນສາກົນໃນຂອບເຂດທົ່ວປະເທດ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ, ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານ ກົມພາສີ ເພື່ອຂໍທິດຊີ້ນຳໃນການແກ້ໄຂ ບົນພື້ນຖານກົດໝາຍ ແລະ ລະບຽບການ.

ມາດຕາ 06: ຂໍ້ຕົກລົງສະບັບ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ບັນດານິຕິກຳອື່ນໆ ທີ່ກົມພາສີໄດ້ອອກຜ່ານມາ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກລົບລ້າງ.

ຮ໌ ຫົວໜ້າກົມພາສີ

ກະຊວງ ການເງິນ
ກົມພາສີ

ບຸນປະເສີດ ສີກຸນລະບຸດ

<u>ບ່ອນນຳສົ່ງ:</u>

| | |
|---|---|
| - ທ່ານ ລມຕ, ຣລມຕ ກງ ທ່ານລະ | 01 ສະບັບ ໃຫ້ຕາງລາຍງານ. |
| - ຄະນະກົມພາສີ ທ່ານລະ | 01 ສະບັບ ເພື່ອຕິດຕາມ, ກວດກາ. |
| - ບັນດາພະແນກອ້ອມຂ້າງກົມພາສີ, ພະແນກລະ | 01 ສະບັບ ເພື່ອຕິດຕາມ, ກວດກາ. |
| - ກອງຄຸ້ມຄອງພາສີ I-VII | 01 ສະບັບ ເພື່ອຈັດຕັ້ງປະຕິບັດ. |
| - ດ່ານພາສີສາກົນໃນທົ່ວປະເທດ | 01 ສະບັບ ເພື່ອຈັດຕັ້ງປະຕິບັດ. |
| - ເກັບມ້ຽນສຳເນົາ | 01 ສະບັບ. |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມພາສີ

ພະແນກຈັດຕັ້ງ, ບໍລິຫານ ແລະ ການເງິນ

ເລກທີ 0134 /ຈບງ.

ນະຄອນຫຼວງວຽງຈັນ, ວັນທີ 13 ມີນາ 2020

## ສະໂນດນໍາສົ່ງ

ຮຽນ : ບັນດາທ່ານຫົວໜ້າພະແນກອ້ອມຂ້າງກົມພາສີ.

ບັນດາທ່ານຫົວໜ້າກອງຄຸ້ມຄອງພາສີ I, II, III, IV, V, VI ແລະ VII.

ບັນດາທ່ານຫົວໜ້າດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.

ເລື່ອງ : ນໍາສົ່ງເອກະສານ.

- ອີງຕາມ ທິດຊີ້ນໍາຂອງທ່ານຮັກສາການຫົວໜ້າກົມພາສີ ລົງວັນທີ 13 ມີນາ 2020.

ເອກະສານຕິດຄັດມາພ້ອມນີ້:

| ລ/ດ | ເນື້ອໃນເອກະສານ | ຈໍານວນ | ໝາຍເຫດ |
|---|---|---|---|
| 1 | ຂໍ້ຕົກລົງຂອງກົມພາສີ ສະບັບເລກທີ 01446/ກພສ, ລົງວັນທີ 13 ມີນາ 2020 ວ່າດ້ວຍການມອບສິດໃນການອະນຸຍາດໃຫ້ນໍາເຂົ້າສິນຄ້າ, ເຄື່ອງຂອງອອກຈາກສາງ ຫຼື ດ່ານພາສີ ກ່ອນການແຈ້ງພາສີເປັນລາຍລະອຽດ. | 01 ສະບັບ | "ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ". |
| | ລວມ. | 01 ສະບັບ | |

ຫົວໜ້າພະແນກ

ພະແນກ ຈັດຕັ້ງ, ບໍລິຫານ ແລະ ການເງິນ ກົມພາສີ

ວົງວັນເພັງ ພູມສະຫວັນ